## ບົດຄຳເຫັນຂອງ
## ຫົວໜ້າສາຂາ ທະນາຄານແຫ່ງ ສປປ ລາວ ພາກໃຕ້ ແຂວງ ຈຳປາສັກ



ນັບແຕ່ແນວທາງການປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກ ໄດ້ຖືກຮັບຮອງເອົາໃນກອງປະຊຸມໃຫຍ່ຂອງພັກປະຊາຊົນປະຕິວັດລາວ ຄັ້ງທີ IV ໃນປີ 1986 ເປັນຕົ້ນມາ, ລະບົບເສດຖະກິດຂອງ ສປປ ລາວ ໄດ້ກ້າວເຂົ້າສູ່ບາດລ້ຽວໃໝ່ ໂດຍສະເພາະຂົງເຂດທະນາຄານ ມີການປ່ຽນແປງຢ່າງຕັ້ງໜ້າ, ເຊິ່ງໄດ້ຫັນລະບົບທະນາຄານ ທີ່ເປັນອັນໜຶ່ງອັນດຽວໃນເມື່ອກ່ອນໄປສູ່ລະບົບທະນາຄານສອງຂັ້ນໃນປີ 1989, ໄດ້ແຍກພາລະບົດບາດຂອງທະນາຄານກາງ ແລະ ທະນາຄານທຸລະກິດອອກຈາກກັນຢ່າງຈະແຈ້ງ. ທະນາຄານທຸລະກິດລັດ ແລະ ເອກະຊົນ ໄດ້ຮັບການສ້າງຕັ້ງຂຶ້ນ ແລະ ໄດ້ເລີ່ມຫັນໄປສູ່ການໄລ່ລຽງທຸລະກິດ, ການເຄື່ອນໄຫວທຸລະກິດຂອງທະນາຄານໄດ້ເລີ່ມເຂົ້າສູ່ຍຸກຂອງການແຂ່ງຂັນ ນັບແຕ່ປີ 1990 ເປັນຕົ້ນມາ.

ຄືດັ່ງບັນດາທ່ານຮັບຊາບແລ້ວວ່າ: 04 ແຂວງພາກໃຕ້ (ແຂວງຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື) ເປັນອີກພາກໜຶ່ງຂອງ ສປປ ລາວ ທີ່ມີທ່າແຮງບົ່ມຊ້ອນໃນຫຼາຍໆ ດ້ານ, ມີຊັບພະຍາກອນທຳມະຊາດອັນອຸດົມສົມບູນ, ມີແຫຼ່ງທ່ອງທ່ຽວດ້ານວັດທະນະທຳທີ່ມີຄວາມຮຸ່ງເຮືອງເປັນມໍລະດົກໂລກ ເຊັ່ນ: ຜາສາດຫີນວັດພູ, ນ້ຳຕົກຄອນພະເພັງ. ສິ່ງສຳຄັນຍັງເປັນຈຸດສູນກາງເຊື່ອມຈອດກັບບັນດາປະເທດ 4 ຫຼ່ຽມເສດຖະກິດ ຄື: ລາວ, ຫວຽດນາມ, ໄທ ແລະ ກຳປູເຈຍ, ເຊິ່ງບັນດາປັດໃຈທັງຫຼາຍເຫຼົ່ານີ້ ໄດ້ເປັນແຮງຈູງໃຈດຶງດູດການລົງທຶນຈາກຫຼາຍພາກສ່ວນ, ໂດຍສະເພາະ ບັນດາສະຖາບັນການເງິນ ທີ່ເຂົ້າມາລົງທຶນສ້າງຕັ້ງທະນາຄານ, ສາຂາທະນາ, ໜ່ວຍບໍລິການ, ຕົວແທນ ແລະ ບັນດາສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ ນັບມື້ນັບເພີ່ມຂຶ້ນ; ຄຽງຄູ່ກັນນັ້ນ, ເພື່ອສ້າງຄວາມເຂັ້ມແຂງ ແລະ ເພີ່ມປະສິດທິພາບຂອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ ຈຶ່ງຕົກລົງສ້າງຕັ້ງສາຂາທະນາຄານແຫ່ງ ສປປ ລາວ ປະຈຳ ພາກໃຕ້ ຂຶ້ນນັບແຕ່ວັນທີ 19 ມີນາ 1999 ເປັນຕົ້ນມາ.

ສາຂາ ທະນາຄານແຫ່ງ ສປປ ລາວ ພາກໃຕ້ ໄດ້ປະກອບສ່ວນອັນສຳຄັນໃນການຮັກສາສະຖຽລະພາບດ້ານການເງິນ-ເງິນຕາ, ການບໍລິການ ແລະ ການຄຸ້ມຄອງສະຖາບັນການເງິນ, ພ້ອມທັງ ປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຢູ່ທ້ອງຖິ່ນຢ່າງຕັ້ງໜ້າ.

ນະໂອກາດນີ້ ຂ້າພະເຈົ້າໃນນາມຫົວໜ້າສາຂາ ທຫລ ພາກໃຕ້ ຂໍສະແດງຄວາມຂອບໃຈມາຍັງຜູ້ນຳພັກ-ລັດ, ການນຳທ້ອງຖິ່ນທຸກຂັ້ນ, ຄະນະຜູ້ວ່າການ, ຄະນະກົມ, ທຽບເທົ່າກົມ, ບັນດາສະຖາບັນການເງິນ ທີ່ໃຫ້ການສະໜັບສະໜູນ ແລະ ຮ່ວມໄມ້ຮ່ວມມືຕະຫຼອດມາ, ຂ້າພະເຈົ້າ ຂໍອວຍພອນ ແດ່ບັນດາທ່ານຈົ່ງມີສຸຂະພາບເຂັ້ມແຂງ, ສົມບູນ ແລະ ປະສົບຜົນສຳເລັດໃນໜ້າທີ່ການງານທຸກປະການ.

**ຫົວໜ້າສາຂາ ທະນາຄານແຫ່ງ ສປປ ລາວ ພາກໃຕ້**